ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ

ເລກທີ 057/ຄຕມຊ

ນະຄອນຫຼວງວຽງຈັນ, ວັນທີ 14 ສິງຫາ 2018

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງກອງເລຂາ

## ຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ

- ອີງຕາມກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ ສະບັບເລກທີ 73/ສພຊ, ລົງວັນທີ 17 ທັນວາ 2015;
- ອີງຕາມດຳລັດສະບັບເລກທີ 245/ນຍ, ລົງວັນທີ 03/07/2018 ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງຄະນະກຳມະການຕ້ານການຄ້າມະນຸດ.
- ອີງຕາມການເຄື່ອນໄຫວຕົວຈິງຂອງຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ.

**ຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ຕົກລົງ:**

**ມາດຕາ 1:** ແຕ່ງຕັ້ງກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ, ຊຶ່ງປະກອບດ້ວຍບັນດາທ່ານ ດັ່ງລຸ່ມນີ້:

1. ທ່ານຮອງຫົວໜ້າກົມໃຫຍ່ຕຳຫຼວດ ຜູ້ຊີ້ນຳວຽກງານຕ້ານການຄ້າມະນຸດ ກະຊວງປ້ອງກັນຄວາມສະຫງົບ ເປັນຫົວໜ້າ;
2. ທ່ານ ຫົວໜ້າກົມສັງຄົມສົງເຄາະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງຫົວໜ້າ;
3. ທ່ານ ຫົວໜ້າສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ສູນກາງສະຫະພັນແມ່ຍິງລາວ ເປັນຮອງຫົວໜ້າ;
4. ທ່ານ ຫົວໜ້າ ກົມອົງການຈັດຕັ້ງສາກົນ ກະຊວງການຕ່າງປະເທດ ເປັນຮອງຫົວໜ້າ;
5. ທ່ານ ຫົວໜ້າ ຫຼື ຮອງ ກົມຄົ້ນຄ້ວາ-ສັງລວມ ຫ້ອງວ່າການສຳນັກງານນາຍົກ ເປັນຄະນະ;
6. ທ່ານ ຫົວໜ້າ ຫຼື ຮອງ ກົມໂຄສະນາອົບຮົມກົດໝາຍ ກະຊວງຍຸຕິທຳ ເປັນຄະນະ;
7. ທ່ານ ຫົວໜ້າ ຫຼື ຮອງ ກົມປິ່ນປົວ ກະຊວງສາທາລະນະສຸກ ເປັນຄະນະ;
8. ທ່ານ ຫົວໜ້າ ຫຼື ຮອງ ຫ້ອງການ ກະຊວງສຶກສາທິການ ແລະ ກິລາ ເປັນຄະນະ;
9. ທ່ານ ຫົວໜ້າ ຫຼື ຮອງ ກົມໂຄສະນາການທ່ອງທ່ຽວ ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ເປັນຄະນະ;
10. ທ່ານ ຫົວໜ້າ ຫຼື ຮອງ ກົມເຍົາວະຊົນ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຄະນະ;
11. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າສະຖາບັນພັດທະນາ ກຳມະບານລາວ ເປັນຄະນະ;
12. ທ່ານ ຜູ້ພິພາກສາ, ຮອງຫົວໜ້າຄະນະສານອາຍາ ສານປະຊາຊົນສູງສຸດ ເປັນຄະນະ;
13. ທ່ານ ຫົວໜ້າ ຫຼື ຮອງ ກົມກວດກາຄະດີອາຍາ ອົງການໄອຍະການປະຊາຊົນສູງສຸດ ເປັນຄະນະ;
14. ທ່ານ ຫົວໜ້າ ຫຼື ຮອງ ກົມຄຸ້ມຄອງລະບົບຍຸຕິທຳ ກະຊວງຍຸຕິທຳ ເປັນຄະນະ;

15. ທ່ານ ຫົວໜ້າ ຫຼື ຮອງ ກົມສົນທິສັນຍາ ແລະ ກົດໝາຍ ກະຊວງການຕ່າງປະເທດ ເປັນຄະນະ;
16. ທ່ານ ຫົວໜ້າ ຫຼື ຮອງ ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ເປັນຄະນະ;
17. ທ່ານ ຫົວໜ້າ ຫຼື ຮອງ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
18. ທ່ານ ຫົວໜ້າ ຫຼື ຮອງ ຫ້ອງການ ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ເປັນຄະນະ;
19. ທ່ານ ຫົວໜ້າ ຫຼື ຮອງ ກົມຊາຍແດນ ແລະ ແຜນທີ່ ກະຊວງປ້ອງກັນປະເທດ ເປັນຄະນະ;
20. ທ່ານ ຫົວໜ້າກົມຕຳຫຼວດສະກັດກັ້ນແລະຕ້ານການຄ້າມະນຸດ, ກົມໃຫຍ່ຕຳຫຼວດ ທັງເປັນຫົວໜ້າຫ້ອງການກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ; ເປັນຄະນະ,
21. ທ່ານ ຫົວໜ້າ ຫຼື ຮອງ ກົມຕຳຫຼວດສາກົນ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
22. ທ່ານ ຫົວໜ້າ ຫຼື ຮອງກົມພົວພັນຕ່າງປະເທດ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
23. ທ່ານ ຫົວໜ້າ ຫຼື ຮອງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ເປັນຄະນະ;
24. ທ່ານ ຫົວໜ້າພະແນກບໍລິຫານ ກົມນິຕິກຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ.

**ມາດຕາ 2 : ກອງເລຂາຄະນະດັ່ງກ່າວ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້ :**

- **ໜ້າທີ່ :**

1. ຄົ້ນຄວ້າຮ່າງນະໂຍບາຍ, ສ້າງແຜນຍຸດທະສາດ, ນິຕິກຳ, ແຜນງານ, ແຜນການ, ໂຄງການ ແລະ ແຜນງົບປະມານ ກ່ຽວກັບວຽກງານການຕ້ານການຄ້າມະນຸດ ສະເໜີຕໍ່ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ເພື່ອສະເໜີລັດຖະບານພິຈາລະນາ;
2. ຄົ້ນຄວ້າ ສົນທິສັນຍາ, ສັນຍາ, ອະນຸສັນຍາ, ຖະແຫຼງການ ແລະ ເອກະສານອື່ນ ຂອງສາກົນທີ່ກ່ຽວກັບວຽກງານການຕ້ານການຄ້າມະນຸດ ສະເໜີຕໍ່ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ເພື່ອສະເໜີລັດຖະບານ ພິຈາລະນາ ລົງນາມ, ຮັບຮອງ, ໃຫ້ສັດຕະຍາບັນ, ເຂົ້າຮ່ວມເປັນພາຄີ, ຖອນຕົວ ຫຼື ຍົກເລີກ;
3. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໃນການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດຂອງ ສປປ ລາວ;
4. ໂຄສະນາເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ, ຍຸດທະສາດ, ແຜນງານ, ແຜນການ, ສະໜອງຂໍ້ມູນຂ່າວສານ, ຜະລິດສື່ໂຄສະນາ, ສ້າງຂະບວນການດ້ວຍຫຼາຍຮູບການກ່ຽວກັບວຽກງານການຕ້ານການຄ້າມະນຸດ ໃຫ້ພາກສ່ວນຕ່າງໆ ຢູ່ພາຍໃນ, ຕ່າງປະເທດ ແລະ ປະຊາ ຊົນ ຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຢ່າງກວ້າງຂວາງ;
5. ສ້າງລະບົບຖານຂໍ້ມູນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ເພື່ອນຳໃຊ້ໃນການສຶກສາ, ຄົ້ນຄວ້າ, ວາງນະໂຍບາຍ ແລະ ມາດຕະການແກ້ໄຂ ຢ່າງເໝາະສົມ;
6. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບລາຍງານ ກ່ຽວກັບຜົນການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ, ແຜນງານ, ໂຄງການ ລວມທັງ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ກ່ຽວກັບວຽກງານການຕ້ານການຄ້າມະນຸດ ໃນແຕ່ລະໄລຍະ ໃຫ້ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ;

7. ໃຫ້ການປົກປ້ອງ, ຊ່ວຍເຫຼືອອັນຈຳເປັນແກ່ຜູ້ຖືກເຄາະຮ້າຍ ລວມທັງນຳສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ ຢ່າງປອດໄພ ພ້ອມທັງສາງເງື່ອນໄຂເພື່ອບໍ່ໃຫ້ເຂົາເຈົ້າກັບຄືນເປັນຜູ້ຖືກເຄາະຮ້າຍອີກ;

8. ຈັດ ແລະ ເຂົ້າຮ່ວມກອງປະຊຸມສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;

9. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຕາມການມອບໝາຍ;

10. ສະຫຼຸບລາຍງານກ່ຽວກັບການເຄື່ອນໄຫວວຽກງານຕ້ານການຄ້າມະນຸດ ໃຫ້ຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ ເປັນແຕ່ລະໄລຍະ;

11. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຂັ້ນເທິງ.

- ຂອບເຂດສິດ :

1. ເຊີນພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມປະຊຸມ ເພື່ອປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂບັນຫາກ່ຽວກັບວຽກງານຕ້ານການຄ້າມະນຸດ;

2. ຈັດກອງປະຊຸມຄົບຄະນະສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານຕ້ານການຄ້າມະນຸດ;

3. ເລັ່ງທວງໃຫ້ບັນດາຂະແໜງການຕ່າງໆ ຂອງສູນກາງ ແລະ ທ້ອງຖິ່ນ ເພື່ອລາຍງານ ແລະ ຕອບສະໜອງຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບວຽກງານຕ້ານການຄ້າມະນຸດ;

4. ຄຸ້ມຄອງ ແລະ ນຳໃຊ້ງົບປະມານປະຈຳປີ, ທຶນຊ່ວຍເຫຼືອ, ພາຫະນະ, ອຸປະກອນຮັບໃຊ້ຕ່າງໆ ເຂົ້າໃນວຽກງານຕ້ານການຄ້າມະນຸດ ໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ;

5. ພົນພັນ, ປະສານງານ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຕາມການມອບໝາຍ;

6. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

ມາດຕາ 3 : - ມອບໃຫ້ກະຊວງທີ່ກ່ຽວຂ້ອງ ແຕ່ງຕັ້ງຜູ້ຕາງໜ້າຂອງຕົນ ທີ່ຮັບຜິດຊອບວຽກງານກ່ຽວຂ້ອງດັ່ງກ່າວ ເພື່ອປະກອບເຂົ້າໃນກອງເລຂາຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ ຕາມທີ່ລະບຸໃນມາດຕາ 1 ແລ້ວແຈ້ງໃຫ້ກົມໃຫຍ່ຕຳຫຼວດ, ກະຊວງປ້ອງກັນຄວາມສະຫງົບ ເພື່ອຊາບ ແລະ ປະກອບລາຍຊື່ເຂົ້າໃນຄະນະດັ່ງກ່າວ.

ມາດຕາ 4 : ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ພ້ອມດ້ວຍທ່ານທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 5 : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ສ່ວນຂໍ້ຕົກລົງເມື່ອກ່ອນ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ແມ່ນຖືກລົບລ້າງ.

**ຮອງນາຍົກລັດຖະມົນຕີ**

**ປະທານຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ**

ປະທານ

**ສອນໄຊ ສີພັນດອນ**